**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 15 ມິຖຸນາ 2008 ( 06-15-2008 )**

---

# ເຮັດແນວໃດຈຶ່ງຈະຮູ້ວ່າບ້ານຂອງທ່ານໄດ້ຮັບຄວາມປອດພັຍຈາກລົມພະຍຸ:

**ຂໍ້ພຣະຄັມພີໃນບົດຮຽນ:** (ສຸພາສິດ 23:22-24:4)

**ຄຳຖາມແຫ່ງຊີວິດ:** ແມ່ນຫຍັງທີ່ຈະສາມາດຊ່ອຍຂ້າມີສິ່ງທີ່ຈະກໍ່ສ້າງຊີວິດຄອບຄົວໃຫ້ມີຄວາມເຂັ້ມແຂງ?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າໃຫ້ຄຳແນະນຳໃນການກໍ່ສ້າງຊີວິດຄອບຄົວໃຫ້ມີຄວາມເຂັ້ມແຂງຂຶ້ນ ແລະ ຊີ້ເຕືອນວ່າສິ່ງໃດທີ່ຈະສາມາດທຳລາຍມັນໄດ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານໄດ້ເຮັດແລະຕິດຕາມພຣະປັນຍາທີ່ພຣະເຈົ້າຊົງໄດ້ປະທານໃຫ້ເພື່ອນຳມາໝູນໃຊ້ໃນຊີວິດປະຈຳວັນໂດຍ:

- ການຄົ້ນພົບທິດທາງໃໝ່ທີ່ຈະກໍ່ສ້າງຊີວິດຄອບຄົວໃຫ້ມີຄວາມເຂັ້ມແຂງຂຶ້ນ ແລະ
- ເລືອກທາງທີ່ຈະສະແດງອອກວ່າທ່ານຈະເຮັດຕາມ ເພື່ອຈະກໍ່ສ້າງໃຫ້ຊີວິດຄອບຄົວມີຄວາມເຂັ້ມແຂງຂຶ້ນ.

## ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>**ແຜນການສອນ**</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

## ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ເຮັດໃຫ້ນັກຮຽນຕັ້ງໝັ້ນຢູ່ທີ່ **ການດຳເນີນຊີວິດໃນສະຕິປັນຍາແຕ່ລະວັນ**
- ຖາມດ້ວຍຄຳຖາມນີ້: ທ່ານຈະເຮັດໃຫ້ຄອບຄົວຂອງທ່ານມີຄວາມເຂັ້ມແຂງຂຶ້ນໄດ້ແນວໃດ?
  ຄຳຖາມທີ່ທ້າທາຍທີ່ໃຫຍ່ທີ່ສຸດໃນຄອບຂອງທ່ານແຕ່ລະວັນ?
- ໃນປື້ມພຣະທັມສຸພາສິດ, ໄດ້ຈັດຕຽມການນຳພາຊີວິດຄອບໃຫ້ເຂັ້ມແຂງເປັນຢ່າງດີ.

1. <u>ຈົ່ງຕັ້ງໝັ້ນຢູ່ໃນຄວາມຈິງ:</u> (ສຸພາສິດ 23:22-25)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ສຸພາສິດ 23:22-25
- ຄໍາຖາມ: ໃນພຣະຄໍານີ້ໄດ້ບອກສອນໃຫ້ຜູ້ໃຫຍ່ດໍາເນີນການນັບຖືບິດາມານດາຂອງຕົນຢ່າງໃດແດ່?
- ຜູ້ທີ່ເຊື່ອທັງຫລາຍໄດ້ສະແດງອອກເຖິງການດໍາຣົງຊີວິດທີ່ມີຄວາມໂຄຣົບນັບຖືພໍ່ແມ່ດ້ວຍສະຕິປັນຍາອັນຖືກຕ້ອງໂດຍຜ່ານທາງການດໍາເນີນຊີວິດຂອງເຂົາເຈົ້າຢ່າງໃດ?
- ພວກເຮົາທີ່ເປັນຜູ້ໃຫຍ່ແລ້ວຄວນຈະສືບຕໍ່ໃນການໂຄຣົບນັບຖືພໍ່ແມ່ໃຫ້ຜ່ານທາງການດໍາຣົງຊີວິດຂອງພວກເຮົາ,ຊຶ່ງພໍ່ແມ່ຂອງຂອງພວກເຮົາໄດ້ເປັນແບບຢ່າງໃຫ້ແກ່ພວກເຮົາມາແລ້ວນັ້ນເປັນຄຸນຄ່າອັນມະຫາສານຂອງການໂຄຣົບນັບຖື.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 23:22-25)
1. ພຣະທັມຕອນນີ້ໄດ້ສະແດງເຖິງການໂຄຣົບນັບຖືພໍ່ແມ່ສືບທອດມາເຖິງພວກເຮົາຢ່າງໃດ?
2. ພໍ່ແມ່ຈະມີຄວາມຮູ້ສຶກຢ່າງໃດໃນເມື່ອລູກໆ ໄດ້ສະແດງຄວາມໂຄຣົບນັບຖືເຂົາເຈົ້າຢ່າງເຫລື້ອມໃສສັດທາ?
3. ໂດຍສ່ວນຕົວບົດຮຽນນີ້ໄດ້ສອນທ່ານໃຫ້ຮູ້ເຖິງບົດບາດໃນການສະແດງອອກຂອງພໍ່ແມ່ຂອງທ່ານແນວໃດ?

2. <u>ຈົ່ງຕັ້ງໝັ້ນຢູ່ໃນຄວາມບໍຣິສຸດ</u> (ສຸພາສິດ 23:26-28)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 23:26-28
- ໃຫ້ນັກຮຽນແບ່ງປັນເຣື່ອງອານາຈັກບູຮານທີ່ມີຄວາມແຕກຕ່າງກັນ, ເຊັ່ນປຶ້ມວາຣະສານ ແລະໜັງສືພິມຕ່າງໆ.ທີ່ກ່ຽວຂ້ອງກັບຄວາມບໍຣິສຸດໃນທາງເພດສັມພັນ. ແລ້ວໃຫ້ນັກຮຽນເວົ້າສິ່ງທີ່ເຂົາເຈົ້າຮູ້ຈັກນັ້ນສູ່ກັນຟັງ ເຊັ່ນ: ການຫລອກລວງທາງເພດສັມພັນທີ່ບໍ່ມີສິນທັມທີ່ແຜ່ຂຍາຍອອກສູ່ສັງຄົມໃນສມັຍນີ້. ການແຜ່ຂຍາຍຂອງການລາມົກອະນາຈານອອກທາງອິນເຕີແນັດກໍເພີ້ມຂຶ້ນທຸກວັນ.
- ໃນພຣະທັມຕອນນີ້ໄດ້ສອນເຣື່ອງການແກ້ພິດພັຍທີ່ແຜ່ລາມອອກທາງເພດສັມພັນທີ່ໄຮ້ສິນທັມຢ່າງນີ້ງໃນໂລກຂອງພວກເຮົາແນວໃດແດ່? ພໍ່ແມ່ຂອງຄຣິສຕຽນບໍ່ຄວນຖືເບົາເອົາງ່າຍໃນການເອົາຊະນະ ເພື່ອອະນາຄົດຂອງລູກໆໃນການເປັນແບບຢ່າງທີ່ບໍຣິສຸດໃນທາງເພດສັມພັນ ແລະໃຫ້ການແຕ່ງງານເປັນການບໍຣິສຸດ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 23:26-28)
1. ທ່ານຈະພັນລະນາເຣື່ອເພດສັມພັນໃນສາທາຣະນະຊົນອະເມຣິກາສມັຍນີ້ວ່າເປັນຢ່າງໃດ?
2. ຕາມທີ່ປາກົດຢູ່ໃນພຣະທັມທີ່ກ່າວມານີ້, ຜູ້ທີ່ເຊື່ອທັງຫລາຍຄວນຈະຕໍ່ຕ້ານຄວາມໄຮ້ສິນທັມແບບນີ້ຢ່າງໃດ?
3. ການຫລອກລວງທາງເພດສັມພັນທີ່ມີຢູ່ຕໍ່ໜ້າທ່ານນັ້ນ ທ່ານຈະອະທິຖານສໍາລັບເຣື່ອງນີ້ຢ່າງໃດ?

3. <u>ຈົ່ງຕັ້ງໝັ້ນຢູ່ຢ່າງເປີດເຜີຍ:</u> (ສຸພາສິດ 23:29-35)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 23:29-35
- ອິດທິພົນ ແລະອັນຕະລາຍຂອງເຫລົ້າ ແລະຢາເສບຕິດນັ້ນຖ້າໃຊ້ໄປໃນທາງທີ່ຜິດກໍເປັນອັນຕະລາຍຕໍ່ຄອບຄົວໄດ້ເໝືອນກັນ.

- ຜູ້ທີ່ຕົກຢູ່ໃຕ້ອຳນາດຂອງເຫລົ້າ ແລະຢາເສບຕິດຈະນຳຜົນອັນຕະລາຍໃຫ້ແກ່ຄອບຄົວ ແລະຕໍ່ເພື່ອນຝູງ.
- ຫັນມາສົນໃຈໃນເລື່ອງຂອງຜູ້ທີ່ຕົກຢູ່ໃນຄວາມຄວບຄຸມຂອງຢາເສບຕິດ/ເຫລົ້າ, ແລ້ວໃຫ້ແບ່ງປັນຄຳພຍານ ຂອງຜູ້ທີ່ຕັດສິນໃຈອອກຈາກການເປັນທາດຂອງສິ່ງເຫລົ່ານັ້ນວ່າເປັນຢ່າງໃດ? ຊ່ອຍເຂົາເຈົ້າໃຫ້ດຳຣົງຊີວິດຢູ່ຢ່າງບໍຣິສຸດຕາມພຣະປະສົງຂອງພຣະເຈົ້າ.
- ໃຫ້ອະທິຖານເປັນປະຈຳ, ຕັດສິນໃຈໂດຍຕົນເອງ, ຕັດສິນໃຈຫລີກລ່ຽງ ປ້ອງກັນຈາກການໃຊ້ເຫລົ້າຢາ
- ແລະມອບໄວ້ກັບອົງພຣະຜູ້ເປັນເຈົ້າໃນເລື່ອງການຕັດສິນໃຈໃນເລື່ອງນີ້.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 23:29-35)

1. ທ່ານຈະທຳລາຍລ້າງເຫລົ້າຢາທີ່ເປັນອັນຕະລາຍແກ່ທ່ານດ້ວຍວິທີໃດ?
2. ຖ້າເບິ່ງແລ້ວທ່ານຄິດວ່າສັງຄົມຂອງພວກເຮົາໃນທຸກມື້ນີ້ມີຄວາມເຂົ້າໃຈເຖິງຄວາມອັນຕະລາຍຂອງສິ່ງເຫລົ່ານີ້ຫລືບໍ່?
3. ພຣະຄັມພີໄດ້ຕັກເຕືອນໃນການໃຊ້ເຫລົ້າວ່າຢ່າງໃດ?

4. <u>ຈົ່ງຕັ້ງໝັ້ນຄົງຢູ່ຢ່າງສລາດ:</u> (ສຸພາສິດ 24:1-4)

- ຂໍໃຫ້ນັກຮຽນອາສາສມັກອ່ານ ສຸພາສິດ 24:1-4
- ຮຽກຮ້ອງໃຫ້ມີຄວາມສົນໃຈໃນຂໍ້ 1-2 ການເລີ້ມຕົ້ນການແນະນຳຂອງພໍ່ແມ່ຄວນໃຫ້ຄຳສັ່ງສອນລູກ. ເປັນຫຍັງຈຶ່ງວ່າການເຊື່ອຖືໃນພຣະເຈົ້າຈຶ່ງເປັນການສຳຄັນແກ່ທຸກຄົນ, ເຊັ່ນດຽວກັນ ການຫລີກເວັ້ນຈາກການອິດສາ ຫລື ການໃຊ້ເວລາຢູ່ກັບຄົນຊົ່ວ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ສຸພາສິດ 24:1-4)

1. ໃນສຸພາສິດບົດທີ 24:1-2 ໃຫ້ຄຳປຶກສາແກ່ທ່ານອີກເທື່ອນຶ່ງໃຫ້ເປັນຄຳເວົ້າຂອງທ່ານເອງ ທ່ານຈະເວົ້າວ່າຢ່າງໃດ?
2. ລັກສະນະ ການສ້າງບ້ານໃຫ້ໝັ້ນຄົງສາມປະການ, ຄົນຂອງພຣະເຈົ້າຈະສ້າງເຮືອນຂອງເຂົາແບບໃດ?
3. ລັກສະນະສະເພາະຢ່າງໃດທາງດ້ານສະຕິປັນຍາ, ການເຂົ້າໃຈແລະຄວາມຮູ້ໃນການສ້າງບ້ານຂອງທ່ານ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຄຣິສຕຽນຕ້ອງມີຄວາມອົດທົນໃນເມື່ອບ້ານໄດ້ຖືກຈູ່ໂຈມຈາກລົມພະຍຸ.
- ຄຣິສຕຽນຄວນຈະຕັ້ງໝັ້ນຄົງຢູ່ໃນຄວາມຈິງ ໃນເລື່ອງມໍຣະດົກຊັບສົມທທີ່ຈະແບ່ງປັນໃຫ້ລູກສືບໄປ.
- ຫລີກເວັ້ນຈາກການເສບສຸຣາຢາເມົາແລະການກະທຳສິ່ງຊົ່ວຮ້າຍຕ່າງໆ ນຳພາຄອບຄົວອອກຈາກປັນຫາທັງຫລາຍທີ່ມີຢູ່ຮອບໆ ຂ້າງ.
- ໃຫ້ເປັນຄົນສລາດ ຢຳເກງພຣະເຈົ້າ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH